# ເອກະສານ
## ປາຖະກະຖາວັນສ້າງຕັ້ງສະຫະພັນນັກຣົບເກົ່າ ຄົບຮອບ 24 ປີ
## (9 ກັນຍາ 2002 - 9 ກັນຍາ 2026)

### I. ສະພາບແວດລ້ອມການສ້າງຕັ້ງສະຫະພັນນັກຣົບເກົ່າແຫ່ງຊາດລາວ

**- ສະພາບແວດລ້ອມພາຍນອກ**

ພາຍຫຼັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງບັນດາປະເທດທີ່ໄດ້ເຂົ້າຮ່ວມສົງຄາມໃນທະວີເອີລົບໄດ້ເກີດມີທະຫານຜ່ານເສິກ (ນັກຣົບເກົ່າ) ຈຳນວນຫຼວງຫຼາຍ, ໃນແຕ່ລະປະເທດກໍ່ໄດ້ຈັດຕັ້ງອົງການຄຸ້ມຄອງບັນດາອາດີດນາຍທະຫານເຫຼົ່ານັ້ນຂຶ້ນຢ່າງເປັນທາງການ; ຈາກນັ້ນກໍ່ໄດ້ມີການພົວພັນເຊິ່ງກັນ ແລະກັນ ຂອງແຕ່ລະປະເທດ; ໃນປີ 1946 ນັກຣົບເກົ່າ ຝຣັ່ງ ແລະແບນຊິກໄດ້ປຶກສາຫາລືກັນຄວາມເປັນໄປໄດ້ໃນການສ້າງຕັ້ງອົງການນັກຣົບເກົ່າສາກົນ; ປີ1948 ຈຶ່ງໄດ້ມີຕົວແທນຈາກອົງການນັກຣົບເກົ່າບາງປະເທດຈາກທະວີບ ເອີລົບ, ອາຟຣິກກາ, ອາເມລິກາ ແລະອາເມລິກາລາຕິນ ມາຮ່ວມປຶກສາຫາລື ແລະກະກຽມສ້າງຕັ້ງອົງການນັກຣົບເກົ່າສາກົນ; ປີ 1950 ຢູ່ທີ່ສຳນັກງານອົງການ ຢູແນັດສະໂກ (UNESCO) ນະຄອນຫຼວງປາຣີ ປະເທດຝຣັ່ງໄດ້ມີກອງປະຊຸມເອກະພາບ ແລະໄດ້ມີມະຕິຕົກລົງສ້າງຕັ້ງອົງການສະຫະພັນບັນດາການຈັດຕັ້ງນັກຣົບເກົ່າສາກົນຂຶ້ນຢ່າງເປັນທາງການ; ປີ 1951 ເພີ່ນໄດ້ປ່ຽນຊື່ອົງການສະຫະພັນນັກຣົບເກົ່າສາກົນມາເປັນສະຫະພັນນັກຣົບເກົ່າໂລກ(World Veterene Federation) ຂຽນຫຍໍ້ວ່າ “ WVF”

ໂດຍໄດ້ຮັບຜົນສະທ້ອນຈາກການສ້າງຕັ້ງອົງການສະຫະພັນນັກຣົບເກົ່າໂລກ ບັນດາປະເທດຕ່າງໆ ໄດ້ສ້າງຕັ້ງອົງການນັກຣົບເກົ່າຂອງຕົນຂຶ້ນເປັນຕົ້ນທະວີບຢູໂລບ, ອາຟຣາລິກກາ, ອາຊີ, ອາເມລິກາໃຕ້ ແລະ ເຂດອື່ນໆ ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍໃສ່ຊື່ເອີ້ນແຕກຕ່າງກັນ; ສຳລັບຢູ່ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ຫຼື ເອີ້ນວ່າ ອາຊຽນກໍ່ໄດ້ສ້າງຕັ້ງອົງການຈັດຕັ້ງນັກຣົບເກົ່າຂຶ້ນເອີ້ນວ່າ: ສະມາພັນນັກຣົບເກົ່າອາຊຽນ, ເຊິ່ງເປັນອົງການຈັດຕັ້ງທີ່ເຕົ້າໂຮມເອົາບັນດາການຈັດຕັ້ງຂອງນັກຣົບເກົ່າໃນກຸ່ມປະເທດອາຊຽນ ແລະສ້າງຕັ້ງຂຶ້ນໃນວັນທີ 19 ທັນວາ 1980 ເຊິ່ງໃນເບື້ອງຕົ້ນປະກອບມີ 5 ປະເທດ ຄື: ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ໄທ ແລະສິງກະໂປ; ຈາກນັ້ນ ບຣູໄນ ເຂົ້າເປັນສະມາຊິກ ປີ 1992, ຫວຽດນາມ ປີ 1997, ກຳປູເຈຍ ປີ 2010, ລາວ ແລະມຽນມາ ກໍ່ເຂົ້າຮ່ວມເປັນສະມາຊິກໃນ ປີ 2012; ປະຈຸບັນ ຕີມໍເລສເຕ ກໍຖືກເຊີນເຂົ້າຮ່ວມໃນນາມຜູ້ສັງເກດການ.

**- ສະພາບແວດລ້ອມພາຍໃນ**

ໃນໄລຍະເວລາຕໍ່ສູ້ປົດປ່ອຍຊາດ(ໃນເວລາຢູ່ເຂດປົດປ່ອຍ) ພັກ-ລັດ ກໍ່ໄດ້ເອົາໃຈໃສ່ເບິ່ງແຍງດູແລ ແລະມີນະໂຍບາຍ ຕໍ່ພະນັກງານ-ທະຫານທີ່ເສຍສະຫຼະຊີວິດ ແລະໄດ້ຮັບບາດເຈັບຈາກການສູ້ຮົບ, ຮັບໃຊ້ການສູ້ຮົບ ແລະເສຍອົງຄະປະເພດຕ່າງໆ ໂດຍສ້າງເງື່ອນໄຂໃຫ້ພວກເພິ່ນໄດ້ເຄື່ອນໄຫວຮ່ວມຊີວິດທາງດ້ານການເມືອງ, ໄດ້ຮັບການເບິ່ງແຍງດູແລດ້ານສຸຂະພາບ ແລະໄດ້ຮັບຄວາມອົບອຸ່ນທາງດ້ານຈິດໃຈ ແລະຄອບຄົວ (ເພາະຢູ່ເຂດປົດປ່ອຍພວກເຮົາບໍ່ທັນມີລະບົບອຸດໜູນບຳນານ).

ພາຍຫຼັງປະເທດຊາດປົດປ່ອຍສົມບູນ ພັກ-ລັດໄດ້ເກັບກຳ, ຄຸ້ມຄອງນັກຣົບເກົ່າຢ່າງເປັນລະ ບົບແທດເໝາະກັບ ແຕ່ລະໄລຍະຂອງການປະຕິວັດ ເຊັ່ນ:

ໄລຍະປີ 1975-1977 ຂຶ້ນກັບກະຊວງພາຍໃນ ເຊິ່ງເອີ້ນວ່າ: ກະຊວງພາຍໃນ, ນັກຮົບເກົ່າ ແລະ ສະຫວັດດີການສັງຄົມ ຫຼື ເອີ້ນວ່າ: ກະຊວງພາຍໃນ, ນັກຮົບເກົ່າ ແລະສັງຄົມ;

ໄລຍະປີ 1977-1985 ນັກຮົບເກົ່າປະກອບຢູ່ຄະນະກຳມະການສະຫວັດດີການສັງຄົມ ແລະ ນັກຮົບເກົ່າແຫ່ງຊາດລາວ.

ປີ 1986-1991 ວຽກງານນັກຮົບເກົ່າຂຶ້ນກັບກະຊວງສາທາລະນະສຸກ ແລະສະຫວັດດີການ ສັງຄົມ;

ປີ 1991-2001 ວຽກງານນັກຮົບເກົ່າຂຶ້ນກັບກະຊວງແຮງງານ ແລະສະຫວັດດີການສັງຄົມ, ຊຶ່ງ ມີກົມນັກຮົບເກົ່າສະເພາະ;

ຈາກສະພາບແວດລ້ອມດັ່ງກ່າວ ພັກ-ລັດ ໄດ້ໃຫ້ຄວາມສຳຄັນ ແລະຕີລາຄາສູງຕໍ່ບັນດານັກຮົບ ເກົ່າປະຕິວັດ ທີ່ໄດ້ປະກອບສ່ວນອັນສຳຄັນໃນພາລະກິດປະຕິວັດຊາດປະຊາທິປະໄຕ ກໍ່ຄືບົດບາດຂອງ ນັກຮົບເກົ່າໃນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະພັດທະນາປະເທດຊາດ ໃນ ໄລຍະໃໝ່ ຮອດປີ 2002 ສະຫະພັນນັກຮົບເກົ່າແຫ່ງຊາດລາວ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງ ການ ໂດຍກົມການເມືອງສູນກາງພັກ ໄດ້ອອກມະຕິສະບັບເລກທີ 68/ກມສພ; ລົງວັນທີ 9/9/2002 ວ່າດ້ວຍການສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ; ສະນັ້ນ, ວັນທີ 9 ກັນຍາ 2002 ຈິ່ງເປັນ ວັນສ້າງຕັ້ງສະຫະພັນນັກຮົບເກົ່າລາວ ຢ່າງເປັນທາງການ.

## II. ຄວາມສຳຄັນ ແລະຄວາມຈຳເປັນພາວະວິໄສໃນການສ້າງຕັ້ງສະຫະພັນນັກຮົບເກົ່າ

**ໜຶ່ງ,** ວຽກງານສະຫະພັນນັກຮົບເກົ່າຊ່ວຍ ພັກ-ລັດຖະບານ, ວຽກງານປົກຄອງທຸກຂັ້ນໃນການ ເກັບກຳ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ຕໍ່ບັນດານາຍ ແລະພົນທະຫານ, ນາຍ ແລະພົນຕຳຫຼວດ ປະຕິວັດບຳນານຜູ້ມີຜົນງານ, ຄຸນງາມຄວາມດີໃນພາລະກິດຕໍ່ສູ້ກູ້ຊາດ, ການປົກປັກຮັກສາ ແລະ ພັດທະນາປະເທດຊາດ; ໄດ້ໃຫ້ຄວາມອົບອຸ່ນ, ໄດ້ມີນະໂຍບາຍຕໍ່ລູກຫຼານນັກຮົບເກົ່າ.

**ສອງ,** ວຽກງານນັກຮົບເກົ່າມີບົດບາດສຳຄັນທີ່ສຸດໃນສັງຄົມລາວ, ຊຶ່ງພວກເຮົາບໍ່ອາດຈະຫຼົງ ລືມໄດ້, ເພາະວ່າ ພວກເພິ່ນໄດ້ປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດຕໍ່ສູ້ກູ້ຊາດ ກໍ່ຄືພາລະກິດ ປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ, ສຶກສາອົບຮົມລູກຫຼານ, ຄົນຮຸ່ນໜຸ່ມໃຫ້ມີທັດ ສະນະຫຼັກໝັ້ນການເມືອງໜັກແໜ້ນມີຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈສາມັກຄີເອື້ອເຟື້ອເຜື່ອ ແຜ່ຊ່ວຍເຫຼືອເຊິ່ງກັນ ແລະກັນ, ຮັກສາມູນເຊື້ອ ແລະ ວັດທະນາທຳອັນດີງາມຂອງຊາດ ຕິດພັນກັບ ການປົກປັກຮັກສາໝາກຜົນຂອງການປະຕິວັດ; ສັງຄົມຮັບຮູ້ພ້ອມກັບພວກເຮົາທີ່ໄດ້ເຈືອຈານ ໄປ ທຸກແຫ່ງຫົນທີ່ນັກຮົບເກົ່າໄດ້ປະກອບສ່ວນ ເປັນນາຍບ້ານ, ເປັນແນວໂຮມບ້ານ ແລະປະກອບ ສ່ວນວຽກງານ ປກຊ-ປກສ ບ້ານ.

**ສາມ,** ປະກອບສ່ວນນຳເອົາບົດບາດ ການນຳພາຂອງພັກ ແລະການຄຸ້ມຄອງຂອງລັດ ຕໍ່ທຸກ ຂັ້ນຄົນໃນສັງຄົມລາວ ແນ່ໃສ່ສ້າງຄວາມສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາໃນສັງຄົມ, ປຸກ ລະ ດົມທຸກກຳລັງແຮງບົ່ມຊ້ອນຂອງຊາດ ເວົ້າລວມ, ເວົ້າສະເພາະ ຂອງພະນັກງານປະຕິວັດອາວຸໂສ ຖັນແຖວນັກຮົບເກົ່າເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດແຫ່ງການປົກປັກຮັກສາ ແລະພັດ ທະນາປະເທດຊາດ.

**ສີ່,** ເປັນບ່ອນເຜີຍແຜ່, ເຊື່ອມຊຶມແນວທາງນະໂຍບາຍ, ຂອງພັກ, ລະບຽບ, ກົດໝາຍຂອງລັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດແຕ່ລະໄລຍະໃຫ້ບັນດາສະຫາຍນັກຮົບເກົ່າໄດ້ຮັບຮູ້ຢ່າງ

ທົ່ວເຖິງ; ພ້ອມທັງ ເປັນບ່ອນທ້ອນໂຮມເອົາບົດຮຽນ, ປະສົບການແຫ່ງການນໍາພາຕົວຈິງໄວ້ໃຫ້ຄົນຮຸ່ນສືບທອດ ເພາະເວລາຂອງພວກເພິ່ນຍັງມີໜ້ອຍແລ້ວ; ດັ່ງນັ້ນ, ບົດຮຽນໃນການນໍາພາສູ້ຮົບຕົບຕີຕົວຈິງຢາກໝົດໄປແລ້ວ, ສະນັ້ນ ຜູ້ສືບທອດຕ້ອງໄດ້ຮີບຮ້ອນດ່ວນ ເກັບກໍາຂໍ້ມູນ, ຈົດກ່າຍ, ຖ່າຍຖອດເອົາບົດຮຽນຈາກພວກເພິ່ນ.

**ຫ້າ,** ເປັນບ່ອນເຄື່ອນໄຫວ, ແລກປ່ຽນຄໍາຄິດຄໍາເຫັນ, ຍົກສູງລະດັບຄວາມຮູ້, ຄວາມສາມາດປະສົບການ, ລະຫວ່າງສະມາຊິກດ້ວຍກັນ ໃນການດໍາລົງຊີວິດ ແລະສ້າງເສດຖະກິດຄອບຄົວ ແກ້ໄຂຄວາມຫຍຸ້ງຍາກຂອງນັກຮົບເກົ່ານັບມື້ດີຂຶ້ນ.

## III. ທັດສະນະຂອງພັກຕໍ່ກັບສະຫະພັນນັກຮົບເກົ່າ

ພັກເຮົາ ເວລາໃດກໍ່ໃຫ້ຄວາມສໍາຄັນແກ່ວຽກງານນັກຮົບເກົ່າ ແລະໄດ້ຕີລາຄາສູງຕໍ່ການຈັດຕັ້ງແລະການເຄື່ອນໄຫວ ຂອງສະຫະພັນນັກຮົບເກົ່າແຕ່ລະຂັ້ນ, ໄດ້ເພີ່ມທະວີການຊີ້ນໍານໍາພາ-ວຽກງານນັກຮົບເກົ່າຢ່າງເປັນປະຈໍາ; ພັກນໍາພາການຈັດຕັ້ງ ແລະການເຄື່ອນໄຫວຂອງນັກຮົບເກົ່າໃຫ້ປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່ຂອງນັກຮົບເກົ່າ ໃຫ້ຮັກສາໄດ້ມູນເຊື້ອອັນພິລະອາດຫານ, ການເຕົ້າໂຮມສາມັກຄີ ຂອງນັກຮົບເກົ່າ, ການເບິ່ງແຍງດູແລຊ່ວຍເຫຼືອເຊິ່ງກັນ ແລະກັນ, ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຕໍ່ການປະຕິວັດ, ຕໍ່ປະເທດຊາດ, ພ້ອມທັງແກ້ໄຂຊີວິດການເປັນຢູ່ ຂອງພະນັກງານນັກຮົບເກົ່າໃຫ້ນັບມື້ນັບດີຂຶ້ນເລື້ອຍໆ;

ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ປະຊາຊົນປະຕິວັດລາວໄດ້ກໍານົດວ່າ: “ປະຕິບັດລະບອບນະໂຍບາຍຕໍ່ຜູ້ອາວຸໂສບໍານານຕື່ມອີກ, ສ້າງເງື່ອນໄຂໃຫ້ພວກເພິ່ນໄດ້ເຄື່ອນໄຫວຮ່ວມຊີວິດທາງດ້ານການເມືອງ, ໄດ້ຮັບການເບິ່ງແຍງດູແລທາງດ້ານສຸຂະພາບ ແລະໄດ້ຮັບຄວາມອົບອຸ່ນທາງດ້ານຈິດໃຈ”; ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກໍ່ເໜັ້ນຕື່ມອີກວ່າ: “ຄະນະພັກທຸກຂັ້ນຕ້ອງຖືເອົາການປັບປຸງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວສະຫະພັນແມ່ຍິງລາວ, ສະຫະພັນກໍາມະບານລາວຢູ່ຂັ້ນຂອງຕົນໃຫ້ເຂັ້ມແຂງ ແມ່ນວຽກງານພື້ນຖານແລະຄວາມຮັບຜິດຊອບການເມືອງທີ່ຕ້ອງໄດ້ນໍາພາຊີ້ນໍາໂດຍກົງທັງເປັນສ່ວນປະກອບທີ່ສໍາຄັນ ໃນການປັບປຸງພາຍໃນຖັນແຖວຂອງພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ”

ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໄດ້ສືບຕໍ່ຢືນຢັນຢ່າງໜັກແໜ້ນ ຕໍ່ວຽກງານສະຫະ ພັນນັກຮົບເກົ່າວ່າ: “ວຽກງານແນວໂຮມ, ສະຫະພັນນັກຮົບເກົ່າ ແລະ ວຽກງານມະຫາຊົນ ແມ່ນຄວາມຮັບຜິດຊອບໂດຍກົງຂອງພັກ, ຄະນະພັກແຕ່ລະຂັ້ນ ເປັນຜູ້ນໍາພາ-ຊີ້ນໍາຢ່າງໃກ້ຊິດ, ຮອບດ້ານ ເຮັດໃຫ້ບັນດາອົງການທີ່ເຮັດໜ້າທີ່ດັ່ງກ່າວສືບຕໍ່ປະຕິບັດບົດບາດຕົ້ນຕໍ ໃນການເຕົ້າ ໂຮມ ຄວາມສາມັກຄີ, ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ, ເພດໄວ ປະຕິບັດແນວທາງ, ແຜນນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະແຜນພັດທະນາເສດຖະກິດ-ສັງຄົມຂອງລັດ”

ໃນໂຄງການການເມືອງ ຄັ້ງທີ III ຂອງພັກ ຢັ້ງຢືນຄືນອີກຕື່ມວ່າ:“ ພັກເວລາໃດກໍ່ເອົາໃຈໃສ່ກໍ່ສ້າງ ແລະແນະນໍາບັນດາອົງການຈັດຕັ້ງມະຫາຊົນ ໃຫ້ເຄື່ອນໄຫວຖືກຕ້ອງຕາມພາລະບົດບາດຂອງ

ຕົນ, ພັກເຄົາລົບລັກສະນະເປັນເຈົ້າຕົນເອງຂະແຕ່ລະອົງການຈັດຕັ້ງ, ຮັບຟັງຄໍາຄິດຄໍາເຫັນ ຂອງບັນດາການຈັດຕັ້ງທີ່ມີຕໍ່ການນໍາພາຂອງພັກ, ຕໍ່ການຄຸ້ມຄອງບໍລິຫານຂອງລັດ ແລະຕໍ່ພະນັກງານສະມາຊິກພັກ; ພັກຍຶດໝັ້ນເພີ່ມທະວີສາຍພົວພັນ ລະຫວ່າງ ພັກກັບມະຫາຊົນ, ກໍ່ສ້າງພັກຢູ່ໃນຂະບວນການມະຫາຊົນ ແລະຫັນສະມາຊິກພັກລົງຮາກຖານເປັນປະຈໍາ, ຕິດພັນກັບມະຫາຊົນ ແລະຮູ້ເຮັດວຽກງານຂົນຂວາຍປຸກລະດົມມະຫາຊົນ"

## IV. ຜົນງານ,ໄຊຊະນະ ແລະການເຕີບໃຫຍ່ ຂອງສະຫະພັນນັກຮົບເກົ່າໃນຕະຫຼອດໄລຍະ 24 ປີ

### 1. ປະຕິບັດບົດບາດສຶກສາອົບຮົມໃຫ້ສະມາຊິກນັກຮົບເກົ່າປົກປັກຮັກສາ, ເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດ ແລະສຶກສາອົບຮົມຄົນຮຸ່ນໜຸ່ມ.

ຄະນະນໍາສະຫະພັນນັກຮົບເກົ່າແຕ່ລະຂັ້ນໄດ້ຖືສໍາຄັນ ແລະເອົາໃຈໃສ່ເຮັດໜ້າທີ່ວຽກງານສຶກສາອົບຮົມການເມືອງ, ນໍາພາແນວຄິດຕໍ່ບັນດາສະຫາຍສະມາຊິກນັກຮົບເກົ່າ, ພະນັກງານ-ລັດຖະກອນດ້ວຍຫຼາຍຮູບຫຼາຍວິທີ; ຊຶ່ງກ່ອນອື່ນໝົດແມ່ນໄດ້ຫັນລົງຮາກຖານ, ເກັບກໍາສະພາບການເມືອງ-ແນວຄິດ, ຮັບຟັງຄໍາຄິດຄໍາເຫັນຂອງບັນດາສະຫາຍນັກຮົບເກົ່າ ກໍຄືປະຊາຊົນບັນດາເຜົ່າ; ຈັດຕັ້ງເຜີຍແຜ່ເຊື່ອມຊຶມແນວທາງແຜນນະໂຍບາຍ, ມະຕິ, ຄໍາສັ່ງຂອງພັກ, ລະບຽບກົດໝາຍຂອງລັດ; ຈັດຕັ້ງປາຖະກະຖາມູນເຊື້ອ, ເຜີຍແຜ່ສະພາບການ, ສະເຫຼີມສະຫຼອງວັນປະຫວັດສາດສໍາຄັນຂອງຊາດ, ຂອງພັກ-ລັດ, ຂອງກໍາລັງປະກອບອາວຸດ ແລະຂອງອົງການຕົນ; ຈັດຕັ້ງເຊື່ອມຊຶມມະຕິ, ຄໍາສັ່ງ, ກົດລະບຽບຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວຢ່າງທົ່ວເຖິງ.

ທຸກໆວັນບຸນ ຂອງຊາດ, ຂອງພັກ, ກໍາລັງປະກອບອາວຸດ ແລະນັກຮົບເກົ່າ ກໍ່ຄືວັນສໍາຄັນຕ່າງໆ. ສະຫະພັນນັກຮົບເກົ່າແຕ່ລະຂັ້ນໄດ້ຈັດພະນັກງານການນໍາຂອງຕົນລົງປາຖະກະຖາຢູ່ກະຊວງ, ສະຖາບັນ, ໂຮງຮຽນ, ໂຮງໝໍ ແລະກົມກອງຕ່າງໆ ເພື່ອທວນຄືນມູນເຊື້ອ ແລະຜົນງານອັນໂດດເດັ່ນທີ່ມີເນື້ອໃນ, ມີຄວາມໝາຍສໍາຄັນ ແລະເປັນການສຶກສາອົບຮົມແນວຄິດໃຫ້ແກ່ພະນັກງານ-ລັດຖະກອນໄດ້ເຊື່ອມຊຶມກໍາແໜ້ນ ແລະສືບຕໍ່ຮໍ່າຮຽນ, ສືບທອດເອົາມູນເຊື້ອທີ່ພໍ່ແມ່, ອາວອາ, ປ້າລຸງ ໄດ້ສ້າງໃນໄລຍະຜ່ານມາ.

ຊຸກຍູ້ຂະບວນການແຂ່ງຂັນ 3 ດີ 6 ຮັກສາ ຂອງສະຫະພັນນັກຮົບເກົ່າຕິດພັນກັບການແຂ່ງຂັນ "ຮັກຊາດ ແລະພັດທະນາ" ປະຕິບັດວາລະແຫ່ງຊາດ, ວຽກງານ 3 ສ້າງ ຫັນລົງຊຸກຍູ້ຮາກຖານຢ່າງເປັນຂະບວນການຝຶກຝົນເຮັດໃຫ້ມີນັກຮົບເກົ່າ ແລະສະຫະພັນນັກຮົບເກົ່າຕົວແບບ ຫຼື ແບບຢ່າງ ໃຫ້ແກ່ປະຊາຊົນນັບມື້ນັບເພີ່ມຂຶ້ນເລື້ອຍໆ.

### 2. ປະຕິບັດພາລະບົດບາດເປັນຕົວແທນແຫ່ງສິດ ແລະຜົນປະໂຫຍດອັນຊອບທໍາ ຂອງນັກຮົບເກົ່າຕາມແນວທາງ, ແຜນນະໂຍບາຍຂອງພັກ-ລັດ.

ຍາມໃດ, ຄະນະນໍາສະຫະພັນນັກຮົບເກົ່າແຫ່ງຊາດລາວ ກໍ່ໄດ້ນໍາພາ-ຊີ້ນໍາ ແລະຈັດຕັ້ງເຄື່ອນໄຫວວຽກງານ ຂອງຕົນຕາມແນວທາງແຜນນະໂຍບາຍຂອງພັກ-ລັດ ແລະອຸດົມການຂອງຖັນແຖວນັກຮົບເກົ່າສະຫະພັນນັກຮົບເກົ່າແຫ່ງຊາດລາວໄດ້ເປັນໃຈກາງໃນການຮັບຟັງ ແລະ ສັງລວມຄວາມຄິດຄວາມເຫັນຂອງນັກຮົບເກົ່າເພື່ອສ່ອງແສງໃຫ້ຂັ້ນເທິງ ແລະຂໍທິດຊີ້ນໍາໃນການແກ້ໄຂເປັນປະຈໍາ;

ອັນພົ້ນເດັ່ນ ໃນປີ 2018 ກົດໝາຍວ່າດ້ວຍສະຫະພັນນັກຮົບເກົ່າລາວໄດ້ຖືກຮັບຮອງ ແລະປະກາດໃຊ້ຢ່າງເປັນທາງການ, ເຊິ່ງເປັນຂີດໝາຍປະຫວັດສາດຂອງສະຫະພັນນັກຮົບເກົ່າ ທີ່ມີນິຕິກໍາໃນການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາໂດຍແທ້ຈິງຕໍ່ພະນັກງານ-ນັກຮົບເກົ່າ;

ເອົາໃຈໃສ່ຕິດຕາມ, ຊຸກຍູ້, ການປະຕິບັດນະໂຍບາຍຂອງພັກ-ລັດ ທີ່ມີຕໍ່ພະນັກງານ-ນັກຮົບເກົ່າ

ທີ່ມີຜົນງານຄຸນງາມຄວາມດີຕໍ່ການປະຕິວັດຊາດປະຊາທິປະໄຕ;

ປະຈຸບັນ ກົງຈັກສະຫະພັນນັກຮົບເກົ່າຂັ້ນແຂວງ ມີ ນະຄອນຫຼວງວຽງຈັນ ແລະ 17 ແຂວງ ຂັ້ນເມືອງສ້າງຕັ້ງໄດ້ທັງໝົດ 145 ເມືອງ ແລະ 3 ນະຄອນ, ສະຫະພັນນັກຮົບເກົ່າຂັ້ນບ້ານ ໄດ້ທັງໝົດ 1.750 ບ້ານ, (ກຳລັງຄົ້ນຄວ້າຈັດຕັ້ງສະຫະພັນນັກຮົບບເກົ່າຂັ້ນຕາແສງ), ສະມາຊິກນັກຮົບເກົ່າທັງໝົດ 61,217 ສະຫາຍ, ຍິງ 6,662 ສະຫາຍ ກວມເອົາ 85% ຂອງຈຳນວນນັກຮົບເກົ່າທັງໝົດ, ສາມາດອອກບັດສະມາຊິກນັກຮົບເກົ່າໄດ້ທັງໝົດ15.876 ບັດ, ກວມ 30% ຂອງສະມາຊິກທັງໝົດ.

**3. ການປຸກລະດົມຖັນແຖວນັກຮົບເກົ່າ ປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ.**

ຖັນແຖວນັກຮົບເກົ່າສ່ວນຫຼວງຫຼາຍ ໄດ້ສູ້ຊົນພັດທະນາຕົນເອງໃນດ້ານຕ່າງໆ ຢ່າງຕັ້ງໜ້າ ເຮັດໃຫ້ເກີດມີຄອບຄົວວັດທະນະທຳ, ຄອບຄົວປອດຄະດີ, ຄອບຄົວພັດທະນາ ແລະຫຼາຍຄອບຄົວສາມາດຫຼຸດພົ້ນອອກຈາກຄວາມທຸກຍາກ; ພ້ອມທັງປະກອບສ່ວນ ນຳພາ-ຊີ້ນຳ ວຽກງານຂອງບ້ານ ແລະຈັດຕັ້ງປະຕິບັດວຽກງານ 3 ສ້າງໄດ້ຮັບໝາກຜົນຕົວຈິງ; ບັນດາສະຫາຍນັກຮົບເກົ່າສ່ວນຫຼວງຫຼາຍໄດ້ຍົກສູງສະຕິຄວາມເປັນແບບຢ່າງໃຫ້ແກ່ຄົນຮຸ່ນໜຸ່ມ, ດຳລົງຊີວິດປອດໃສ; ປະກອບສ່ວນສຶກສາອົບຮົມລູກຫຼານຢູ່ຮາກຖານ, ປຸກລະດົມຊາວໜຸ່ມອອກປະຕິບັດພັນທະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ຍາມໃດ, ນັກຮົບເກົ່າ ກໍ່ໄດ້ຮັບຄວາມເຊື່ອໝັ້ນ ແລະເຄົາລົບນັບຖືຈາກອຳນາດການປົກຄອງ ກໍ່ຄືພໍ່ແມ່ປະຊາຊົນຊັ້ນຄົນຕ່າງໆຢູ່ຮາກຖານເປັນຢ່າງດີ ແລະຈຳນວນໜຶ່ງກໍ່ໄດ້ຮັບການມອບໝາຍໃຫ້ເປັນນາຍບ້ານ, ທີ່ປຶກສາຄະນະພັກ, ແນວໂຮມບ້ານ ແລະ ຮັບຜິດຊອບວຽກງານອົງການຈັດຕັ້ງສະຫະພັນແມ່ຍິງບ້ານ.

ພ້ອມດຽວກັນນັ້ນ, ສະຫາຍນັກຮົບເກົ່າຍັງໄດ້ເຂົ້າຮ່ວມປັບປຸງບູລະນະອຳນາດລັດປະຊາ ທິປະໄຕ, ຕິດຕາມກວດກາການເຄື່ອນໄຫວຂອງອົງການລັດ, ສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນ ແລະ ສະມາຊິກສະພາດັ່ງກ່າວ.

**4. ການປະຕິບັດໜ້າທີ່ໃນການປຸກລະດົມສະມາຊິກນັກຮົບເກົ່າສ້າງເສດຖະກິດ, ແກ້ໄຂຊີວິດການເປັນຢູ່ແກ້ໄຂຄວາມທຸກຍາກ.**

ສະຫະພັນນັກຮົບເກົ່າແຕ່ລະຂັ້ນ, ສະມາຊິກນັກຮົບເກົ່າສ່ວນຫຼວງຫຼາຍ ໄດ້ເປັນເຈົ້າການນຳພາການຜະລິດສ້າງແຫຼ່ງລາຍຮັບ ເພື່ອແກ້ໄຂຊີວິດການເປັນຢູ່, ເບິ່ງແຍງ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນຍາມພົບຄວາມຫຍຸ້ງຍາກ ໂດຍຖືເອົາການຜະລິດກະສິກຳປູກຝັງ-ລ້ຽງສັດ, ການບໍລິການເຮັດໃຫ້ຄອບຄົວນັກຮົບເກົ່າຜູ້ທີ່ທຸກຍາກໄດ້ຮັບການພັດທະນາ ແລະປັບປຸງຕົນເອງໃຫ້ແທດເໝາະກັບການດຳລົງຊີວິດໃນເງື່ອນໄຂໃໝ່ ເຮັດໃຫ້ຄອບຄົວນັກຮົບເກົ່າຜູ້ທຸກຍາກຫຼຸດລົງ, ປະຈຸບັນ ພວມຈັດຕັ້ງປະຕິບັດໂຄງການແກ້ໄຂປຸກສ້າງເຮືອນໃຫ້ນັກຮົບເກົ່າຜູ້ທຸກຍາກປ່ຽວພອຍຂາດທີ່ຢູ່ອາໃສ.

ການສ້າງກອງທຶນໃນຮູບແບບຕ່າງໆ, ການຮ່ວມມືທຸລະກິດກັບນັກທຸລະກິດພາຍໃນ ແລະຕ່າງປະເທດ ມີຫຼາຍແຂວງ, ເມືອງ ແລະບ້ານມີກອງທຶນຊ່ວຍເຫຼືອເຊິ່ງກັນ ແລະກັນ ຂອງນັກຮົບເກົ່າເຊິ່ງສາມາດແກ້ໄຂໄດ້ໂດຍພື້ນຖານ ໃນເວລາເຈັບເປັນ ແລະພົບຄວາມຫຍຸ້ງຍາກໃນຄອບຄົວ ຂອງສະມາຊິກກອງທຶນ.

ເພື່ອເປັນການປະກອບສ່ວນເຂົ້າໃນວຽກງານແກ້ໄຂຄວາມທຸກຍາກຂອງນັກຮົບເກົ່າ ແລະສ້າງເງື່ອນໄຂສະດວກໃນການເຄື່ອນໄຫວວຽກງານນັກຮົບເກົ່າ ພັກ-ລັດ ກໍໄດ້ລົງທຶນຮອນໃສ່ການກໍ່

ສ້າງພື້ນຖານໂຄງລ່າງຈໍານວນໜຶ່ງ ເຊິ່ງຜ່ານມາສໍາເລັດໃນການສ້າງຫ້ອງມູນເຊື້ອ; ຫ້ອງການເຮັດວຽກນັກຮົບເກົ່າຂັ້ນເມືອງຈໍານວນ 27 ເມືອງ, ປຸກເຮືອນໃຫ້ນັກຮົບເກົ່າຜູ້ທຸກຍາກປ່ຽວພອຍ 26 ຫຼັງ, ປຸກສ້າງສໍານັກງານສູນກາງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຫຼັງໃໝ່ໄດ້ ສໍາເລັດ 85%,

**5. ວຽກງານພົວພັນຮ່ວມມືກັບຕ່າງປະເທດ.**

ໂດຍປະຕິບັດຕາມແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະການຮ່ວມມື ເພື່ອພັດທະນາຕາມທິດນໍາ ຖືການທູດປ້ອງກັນເຫດ, ການທູດເສດຖະກິດ ແລະບຸກທະລຸ; ການພົວພັນຮ່ວມມືກັບຕ່າງປະເທດໃນຂົງເຂດນັກຮົບເກົ່າໄດ້ຮັບການຈັດຕັ້ງຜັນຂະຫຍາຍນັບມື້ນັບກວ້າງຂວາງ, ກ້າວເຂົ້າສູ່ລວງເລິກ ແລະນໍາເອົາຜົນປະໂຫຍດຕົວຈິງມາສູ່ປະເທດຊາດ, ມາສູ່ສະຫະພັນນັກຮົບເກົ່າ; ການພົວພັນຮ່ວມມືສາມັກຄີພິເສດ ແລະການຮ່ວມມືຮອບດ້ານກັບສະມາຄົມນັກ ຮົບເກົ່າຫວຽດນາມນັບແຕ່ຂັ້ນສູນກາງ ຮອດຂັ້ນທ້ອງຖິ່ນໄດ້ຮັບການຜັນຂະຫຍາຍຢ່າງມີປະສິດທິຜົນ; ໄດ້ມີການເຄື່ອນໄຫວພົບປະແລກປ່ຽນບົດຮຽນ, ຢ້ຽມຢາມ,ທັດສະນະສຶກສາ ,ເຂົ້າຮ່ວມກອງປະຊຸມ , ກວດສຸຂະພາບ,ພັກຜ່ອນ , ເຮັດວຽກທາງການ ລະຫວ່າງສອງອົງການນັກຮົບເກົ່າລາວຫວຽດນາມເປັນປົກກະຕິ-; ນອກຈາກນັ້ນ, ຍັງໄດ້ພົວພັນຮ່ວມມື 2 ຝ່າຍກັບສະມາຄົມນັກຮົບເກົ່າກໍາປູເຈຍ; ໄດ້ພົວພັນປະສານງານກັບສະມາຄົມນັກຮົບເກົ່າໂລກ ສະມາຄົມນັກຮົບເກົ່າລັດເຊຍ, ຝຣັ່ງ, ອົງການຈັດຕັ້ງສາກົນ; ອົງການທະຫານຜ່ານເສິກໄທ, ສະມາຄົມນັກຮົບເກົ່າຕ້ານຈັກກະພັດ ສປປ ເກົາຫຼີ; ໄປຄຽງຄູ່ກັບການພົວພັນຮ່ວມມືກັບຄະນະຜູ້ແທນນັກຮົບເກົ່າມົນທົນຕ່າງໆ ຂອງ ສປ ຈີນ, ສະໂມສອນອາດີດນາຍທະຫານອາຊຽນປະເທດສິງກະໂປ; ຄະນະສະມາຄົມຄອບຄົວທະຫານ ແລະຄະນະເກັບກູ້ກະດູກອາເມລິກາ; ພ້ອມກັນນັ້ນ, ກໍ່ໄດ້ຕັ້ງໜ້າປະຕິບັດພັນທະ, ໜ້າທີ່ໃນຖານະເປັນສະມາຊິກສະມາພັນນັກຮົບເກົ່າອາຊຽນດ້ວຍຄວາມເປັນເຈົ້າການ ນັບແຕ່ເຂົ້າເປັນສະມາຊິກ ປີ 2012 ເປັນຕົ້ນມາ ແລະໄດ້ຮັບການມອບໝາຍໃຫ້ເປັນປະທານໝູນວຽນສະມາພັນນັກຮົບເກົ່າອາຊຽນ ໃນປີ 2018 ແລະເປັນເຈົ້າພາບຈັດກອງປະຊຸມໃຫຍ່ ຄັ້ງທີ XVIII ສະມາພັນນັກຮົບເກົ່າອາຊຽນທີ່ນະຄອນຫຼວງວຽງ ຈັນໃນປີດຽວກັນນັ້ນ, ໂດຍໄດ້ຮັບຜົນສໍາເລັດຢ່າງຈົບງາມ; ເຊິ່ງທັງໝົດນັ້ນພວກເຮົາສາມາດຍາດແຍ່ງໄດ້ບົດຮຽນ, ການສະໜັບສະໜູນ, ການຮ່ວມມື ແລະການຊ່ວຍ ເຫຼືອຈາກເພື່ອມິດສາກົນ , ນໍາເອົາຜົນປະໂຫຍດຕົວຈິ່ງມາສູ່ນັກຮົບເກົ່າລາວ ກໍ່ຄືປະເທດຊາດເຮັດໃຫ້ສະຫະພັນນັກຮົບເກົ່າລາວຂອງພວກເຮົາມີບົດບາດ ພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະສາກົນ.

**V ທິດທາງໃນຕໍ່ໜ້າ ໃນການເສີມຂະຫຍາຍທາດແທ້ມູນເຊື້ອ ຂອງນັກຮົບເກົ່າເຂົ້າໃນພາລະກິດປົກປັກຮັກສາ ແລະພັດທະນາປະເທດຊາດ.**

ໂດຍສືບຕໍ່ປະຕິບັດແນວທາງມະຫາສາມັກຄີທົ່ວປວງຊົນຢ່າງແຂງແຮງ, ເສີມຂະຫຍາຍບົດບາດຂອງສະຫະພັນນັກຮົບເກົ່າໃນການປຸກລະດົມຂົນຂວາຍມະຫາຊົນຢ່າງກວ້າງຂວາງ; ສະນັ້ນ, ສະຫະພັນນັກຮົບເກົ່າແຕ່ລະຂັ້ນຕ້ອງຍົກສູງບົດບາດເປັນຕົວແທນແຫ່ງສິດຜົນປະໂຫຍດອັນຊອບທໍາຂອງນັກກຮົບເກົ່າປະຕິວັດ, ສ້າງການຫັນປ່ຽນຢ່າງແຂງແຮງຮອບດ້ານຕໍ່ວຽກງານສະຫະພັນນັກຮົບເກົ່າ, ສືບຕໍ່ປົກປັກຮັກສາໝາກຜົນຂອງການປະຕິວັດ ໃນໄລຍະໃໝ່, ດັ່ງນັ້ນ, ທິດທາງໃນການເສີມຂະຫຍາຍມາດແທ້ມູນເຊື້ອຂອງນັກຮົບເກົ່າໃນຊຸມປີຕໍ່ໜ້າ ຕ້ອງສຸມໃສ່ບາງດ້ານດັ່ງນີ:

**ໜຶ່ງ,** ເພີ່ມທະວີເອົາໃຈໃສ່ສຶກສາອົບຮົມມູນເຊື້ອ, ທາດແທ້ປະຕິວັດຂອງພະນັກງານນັກຮົບເກົ່າ, ກໍ່ຄືຂອງສະຫະພັນນັກຮົບເກົ່າໃຫ້ທະຫານ, ຕໍາຫຼວດ, ພະນັກງານ-ລັດຖະກອນ ແລະປະ ຊາຊົນບັນດາເຜົ່າໃຫ້ເລິກເຊິ່ງ, ກ້ວາງຂວາງ ຕິດພັນກັບການເຊື່ອມຊຶມ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ,ໂຄງການການເມືອງ ຄັ້ງທີ III ຂອງພັກ, ແຜນພັດທະນາເສດຖະກິດ-

ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະແຂ່ງຂັນ “ຮັກຊາດ ແລະ ພັດທະນາ” ມະຕິກອງປະຊຸມໃຫຍ່ຜູ້ແທນນັກຮົບເກົ່າທົ່ວປະເທດ ຄັ້ງທີ V ແລະແຜນພັດນານັກຮົບເກົ່າ ຄັ້ງທີ IV ປີ 2026-2030 ໃຫ້ເປັນຂະບວນການ ແລະມີໝາກຜົນຕົວຈິງ.

**ສອງ,** ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະແບບແຜນວິທີເຄື່ອນໄຫວຂອງອົງການຈັດຕັ້ງສະຫະພັນນັກຮົບເກົ່າແຕ່ລະຂັ້ນ ໃຫ້ກະທັດຮັດເບົາບາງ ແຕ່ເຂັ້ມແຂງ ແລະມີປະສິດທິພາບ, ໂດຍສຸມໃສ່ບູລະນະການຈັດຕັ້ງສະຫະພັນນັກຮົບເກົ່າແຕ່ລະຂັ້ນໃຫ້ເຂັ້ມແຂງ, ໜັກແໜ້ນ ໂດຍເອົາໃຈໃສ່ສ້າງບຸກຄະລະກອນຂອງສະຫະພັນນັກຮົບເກົ່າໃຫ້ມີຄຸນທາດການເມືອງ, ຄຸນສົມບັດ ແລະມີຄວາມສາມາດສົມຄູ່ກັບໜ້າທີ່ການເມືອງ, ສົມກຽດເປັນອົງການຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳຂອງນັກຮົບເກົ່າ.

**ສາມ**, ສືບຕໍ່ປຸກລະດົມຂົນຂວາຍ, ເຕົ້າໂຮມຄວາມສາມັກຄີນັກຮົບເກົ່າ ແລະປະຊາຊົນລາວບັນດາເຜົ່າ; ດ້ວຍການປັບປຸງວິທີປຸກລະດົມຂົນຂວາຍປະຊາຊົນ, ປ່ຽນແປງໃໝ່ເນື້ອໃນ ແລະວິທີການເຄື່ອນໄຫວໃຫ້ແທດເໝາະກັບຕົວຈິງ, ມີຫຼາຍຮູບຫຼາຍສີ ແລະມີປະສິດທິຜົນສູງຂຶ້ນ, ສ້າງຄວາມເຊື່ອໝັ້ນຂອງມະຫາຊົນຕໍ່ການນຳພາຂອງພັກ, ຂອງລັດ; ຕ້ານທຸກປະກົດການອາດຍາ ສິດທີ່ເຮັດໃຫ້ອົງການຈັດຕັ້ງສະຫະພັນນັກຮົບເກົ່າກາຍເປັນພຽງອົງການບໍລິຫານເກື້ອກູນ;

**ສີ່,** ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈມະຕິຂອງພັກ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍບາດກ້າວບຸກທະລຸທາງດ້ານການແກ້ໄຂຊີວິດການເປັນຢູ່ຫຼຸດຜ່ອນຄວາມທຸກຍາກຂອງສະຫາຍນັກຮົບເກົ່າຢູ່ທ້ອງຖິ່ນຮາກຖານ; ສ້າງຕັ້ງກອງທຶນພັດທະນານັກຮົບເກົ່າເພື່ອຊຸກຍູ້ການຜະລິດ, ທຸລະກິດ ແລະການບໍລິການດ້ວຍຮູບການຕ່າງໆທີ່ສອດຄ່ອງກັບຄວາມສາມາດຕົວຈິງ, ຖືກຕ້ອງຕາມກົດໝາຍ ແລະນະໂຍບາຍສະເພາະ ເພື່ອສ້າງເປັນແຫຼ່ງລາຍຮັບ ແລະການກຸ້ມຕົນເອງສ່ວນໃດ ໜຶ່ງດ້ານງົບປະມານຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນ.

**ຫ້າ,** ສືບຕໍ່ຫັນລົງຮາກຖານ ເພື່ອເກັບກຳຄວາມຄິດ, ຄວາມເຫັນ, ກຳແໜ້ນສະພາບການເມືອງ-ແນວຄິດ ແລະຈັດຕັ້ງສຶກສາອົບຮົມ, ເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ,ປຸກລະດົມຂະບວນການແຂ່ງຂັນ 6 ຮັກສາ ຂອງນັກຮົບເກົ່າ ຕິດພັນກັບການແຂ່ງຂັນ “ຮັກຊາດ ແລະ ພັດທະນາ” ໃຫ້ເປັນຂະບວນຟົດຟື້ນ ແລະມີຜົນສຳເລັດຕາມຄາດໝາຍ ທີ່ກຳນົດໄວ້; ໄປຄຽງຄູ່ກັບການປະຕິບັດແຜນພັດທະນານັກຮົບເກົ່າແຕ່ນີ້ຮອດ ປີ 2030 ສຸມໃສ່ 5 ແຜນງານ, 26 ໂຄງການ ໃຫ້ປະກົດຜົນເປັນຈິງ.

**ຫົກ,** ຍຶດໝັ້ນ ແລະເສີມຂະຫຍາຍມູນເຊື້ອຂອງນັກຮົບເກົ່າໃນການພົວພັນກັບຕ່າງປະເທດບົນແນວທາງການຕ່າງປະເທດຂອງພັກ ສັນຕິພາບ ເອກະລາດ ມິດຕະພາບ ແລະການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ, ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ລາວ-ຫວຽດນາມ ແລະການຮ່ວມມືຮອບດ້ານກັບປະເທດເພື່ອນມິດຍຸດທະນາດ ສປ ຈີນ, ລັດເຊຍ, ສປປ ເກົາຫຼີ, ກູບາ;ການປະຕິບັດສັນຍາມິດຕະພາບ ແລະການຮ່ວມມື ລະຫວ່າງ ສະຫະພັນນັກ ຮົບເກົ່າລາວ ກັບ ສະມາຄົມນັກຮົບເກົ່າສາກົນ ແລະສະມາຄົມນັກຮົບເກົ່າບັນດາປະເທດອາຊຽນ ເພື່ອເປັນການຍາດແຍ່ງ ແລະນຳເອົາຜົນປະໂຫຍດ ມາໃຫ້ປະເທດຊາດ ແລະອົງການຈັດຕັ້ງສະຫະພັນນັກຮົບເກົ່າລາວຂອງພວກເຮົາ.

ຄຳຂວັນໂຄສະນາປຸກລະດົມ

1. ຊົມເຊີຍວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຄົບຮອບ 24 ປີ ຢ່າງສຸດໃຈ!
2. ນ້ຳໃຈວັນທີ 9 ກັນຍາ ໝັ້ນຍືນ!